# ບົດສໍາພາດ

## ທ່ານ ພູຂົງ ຈັນທະຈັກ ຜູ້ອໍານວຍການໃຫຍ່ ທຄຕລ
## ເພື່ອຂໍານັບຮັບຕ້ອນ ວັນສ້າງຕັ້ງພັກ ປະຊາຊົນ ປະຕິວັດລາວ ຄົບຮອບ 65 ປີ




### 1. ທ່ານມີຄວາມຮູ້ສຶກແນວໃດ ຕໍ່ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ?

ດັ່ງທີ່ພວກເຮົາຮູ້ແລ້ວວ່າ: ປະຫວັດແຫ່ງການຕໍ່ສູ້ປະຕິວັດຂອງປະຊາຊົນລາວ ບັນດາເຜົ່າໃນກວ່າເຄິ່ງສະຕະ ວັດຜ່ານມານີ້ ໄດ້ຕິດພັນກັບການກໍາເນີດ ແລະ ເຕີບໃຫຍ່ຂະຫຍາຍຕົວຂອງພັກປະຊາຊົນປະຕິວັດລາວ ຕະຫຼອດມາ, ທຸກບາດກ້າວເດີນ, ທຸກໄຊຊະນະຂອງປະຊາຊົນລາວໃນການຕໍ່ສູ້ປະຕິວັດປົດປ່ອຍຊາດໃນເມື່ອກ່ອນ ກໍ່ຄືໄລຍະປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ປະຈຸບັນ ລ້ວນແຕ່ຕິດພັນກັບການນໍາພາຂອງພັກ.

ການກໍາເນີດເກີດຂຶ້ນຂອງພັກປະຊາຊົນປະຕິວັດລາວ ແມ່ນວິວັດທະນາການອັນຈໍາເປັນຂອງປະຫວັດສາດ, ແມ່ນຄວາມຮຽກຮ້ອງຕ້ອງການພາວະວິໄສຂອງຂະບວນການຕໍ່ປະຊາຊົນເຮົາ, ປະຊາຊົນລາວບັນດາເຜົ່າ ໄດ້ສາ ມັກຄີເປັນຈິດໜຶ່ງໃຈດຽວກັນ ດໍາເນີນການຕໍ່ສູ້ອັນລະອິດລະອ້ຽວ ຍືດເຍື້ອຍາວນານ ພາຍໃຕ້ຄັນທຸງຊາດ-ປະຊາທິປະໄຕ ທີ່

ສາມາດສ້າງ ແລະ ໝູນໃຊ້ກາລະໂອກາດໄດ້ຢ່າງຄ່ອງແຄ້ວເພື່ອປັບປຸງ ແລະ ຂະຫຍາຍກຳລັງຕົວຈິງຂອງການປະຕິບັດ, ຕີສັດຕູໃຫ້ຖອຍໄປເທື່ອລະກ້າວ, ຍາດເອົາໄຊຊະນະແຕ່ລະບັ້ນຢ່າງຕໍ່ເນື່ອງ, ຈັບກາລະໂອ ກາດອຳນວຍກ້າວຂຶ້ນຍາດເອົາໄຊຊະນະຢ່າງສົມບູນ, ລົບລ້າງແອກປົກຄອງຂອງພວກລ່າເມືອງຂຶ້ນ ແລະ ສັກດີນາຢ່າງສິ້ນເຊີງ, ສະຖາປານາສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວຂຶ້ນ, ຈົນກ້າວເຂົ້າສູ່ການນຳພາປະຕິບັດ 2 ໜ້າທີ່ຍຸດທະສາດ ໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃຫ້ດີຂຶ້ນເປັນກ້າວໆ.

ເຊິ່ງຜ່ານການຈັດຕັ້ງປະຕິບັດດັ່ງກ່າວເຫັນວ່າ ປະເທດຊາດໄດ້ມີຜົນງານຍິ່ງໃຫຍ່ ແລະ ຜົນສຳເລັດໃນຫຼາຍດ້ານເປັນຕົ້ນແມ່ນ ການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດມະຫາພາກ, ການຈັດຕັ້ງປະຕິບັດງົບປະມານຂອງລັດ, ການແກ້ໄຂໜີ້ສິນສາທາລະນະ; ການປັບປຸງລັດວິສາຫະກິດ; ການບໍລິການຂອງລັດ ເພື່ອອຳນວຍຄວາມສະ ດວກໃຫ້ແກ່ພາກທຸລະກິດ, ການຫລຸດຜ່ອນຂອດຂັ້ນ ທີ່ກົດໜ່ວງຖ່ວງດຶງການພັດທະນາ; ການແກ້ໄຂບັນຫາເງິນ ຕາ; ການຈໍລະຈອນສິນຄ້າ; ການຊຸກຍູ້ສົ່ງເສີມວິສາຫະກິດຂະໜາດກາງ-ຂະໜາດນ້ອຍ ແລະ ການສ້າງຖານລາຍຮັບໃໝ່; ຊົນນະບົດຢູ່ປະເທດເຮົາ ໂດຍລວມໄດ້ມີໂສມໜ້າຫັນປ່ຽນໃໝ່ຢ່າງຈະແຈ້ງ, ນັບທັງພື້ນຖານໂຄງລ່າງ, ລະບົບສາທາລະນຸປະໂພກ, ການຜະລິດ, ບໍລິການ ລ້ວນແຕ່ໄດ້ມີການພັດທະນາ, ຄວາມທຸກຍາກໄດ້ຫລຸດລົງເປັນກ້າວໆ; ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນດີຂຶ້ນ, ດ້ານການສຶກສາກໍມີຄຸນນະພາບຫຼາຍຂຶ້ນ, ດ້ານສາທາ ລະນະສຸກ ກໍໄດ້ຮັບການພັດທະນາ, ເອົາໃຈໃສ່ແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມຢ່າງຕັ້ງໜ້າ ແລະ ດ້ານອື່ນໆກໍໄດ້ຮັບການປັບປຸງດີຂຶ້ນ; ຈາກບັນດາຜົນງານ ແລະ ໄຊຊະນະທີ່ປະຊາຊົນລາວຍາດມາໄດ້ ແມ່ນຍ້ອນພັກເຮົາມີແນວທາງອັນຖືກຕ້ອງ, ຍ້ອນກຳລັງແຮງມະຫາສາມັກຄີຂອງທົ່ວພັກ, ທົ່ວກອງທັບ ແລະ ທົ່ວປວງຊົນ, ຍ້ອນລັດທິຮັກຊາດອັນດູດດື່ມ ແລະ ຈິດໃຈເອກະລາດ, ຍ້ອນການປະສານສົມທົບກຳລັງແຮງຂອງຊາດ ແລະ ຂອງຍຸກສະ ໄໝ, ຍ້ອນພັກເຮົາຍາມໃດກໍ່ຕິດພັນກັບປະຊາຊົນ ອີງໃສ່ກຳລັງແຮງຂອງປະຊາຊົນ ແລະ ເຮັດທຸກສິ່ງທຸກຢ່າງເພື່ອຜົນປະໂຫຍດຂອງປະຊາຊົນ, ມີແຕ່ພັກປະຊາຊົນຊົນປະຕິວັດລາວ ຊຶ່ງເປັນກຳລັງການເມືອງອັນໜຶ່ງອັນດຽວເທົ່ານັ້ນ ທີ່ໄດ້ນຳພາປວງຊົນລາວຜ່ານຜ່າຄວາມຫຍຸ້ງຍາກທຸລະກັນດານ ແລະ ທົດສອບທ້າທາຍຕ່າງໆ ເພື່ອກ້າວເຂົ້າສູ່ຈຸດ ໝາຍສັງຄົມນິຍົມ; ໃນນາມ ຄະນະພັກຮາກຖານ ຄະນະຜູ້ບໍລິຫານ ກໍ່ຄືພະນັກງານໃນທົ່ວລະບົບ ທຄຕລ ຂໍຢັ້ງ ຢືນວ່າຈະຕັ້ງໜ້າປະກອບສ່ວນອຸທິດເຫື່ອແຮງ, ສຸມທຸສະຕິປັນຍາ ແລະ ກຳລັງວັງຊາ ເຂົ້າໃນການປະຕິບັດໜ້າທີ່ການເມືອງຂອງຕົນຕາມພາລະບົດບາດໜ້າທີ່ເປັນການປະອກອບສ່ວນໃນການພັດທະນາປະເທດຊາດ ກໍ່ຄືຂະ ແໜງການເງິນການທະນາຄານ ໃຫ້ເທົ່າທຽມກັບສາກົນ.

## 2. ທ່ານມີຄວາມເຂົ້າໃຈແນວໃດຕໍ່ພັກປະຊາຊົນປະຕິວັດລາວ?

ພັກປະຊາຊົນປະຕິວັດລາວ ສ້າງຕັ້ງຂຶ້ນໃນວັນທີ 22 ມີນາ 1955, ເປັນພັກທີ່ກຳເນີດຂຶ້ນໃນປະເທດກະສິກຳຫຼ້າຫຼັງ, ປະຊາຊົນລາວສ່ວນຫຼວງຫຼາຍແມ່ນຊາວໄຮ່ນາ, ແຕ່ກໍແມ່ນພັກທີ່ເດີນຕາມລັດທິມາກ-ເລນິນ, ເປັນພັກທີ່ສືບທອດພາລະກິດຂອງພັກກອມມູນິດອິນດູຈີນ, ເປັນພັກທີ່ເປັນຕົວແທນຂອງຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານລາວທີ່ແທ້ຈິງ; ເດັດດ່ຽວປົກປັກຮັກສາສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນບັນດາເຜົ່າ ແລະ ຊັ້ນຄົນຕ່າງໆໃນທົ່ວປະເທດ. ພັກຖືເອົາການຮັບໃຊ້ຊາດ, ຮັບໃຊ້ປະຊາຊົນ ເປັນທິດນຳພື້ນຖານໃນການ ເຄື່ອນໄຫວຂອງຕົນ.

ພັກປະຊາຊົນປະຕິວັດລາວ ປະຕິບັດສອງໜ້າທີ່ຍຸດທະສາດ ຄື: ປົກປັກຮັກສາລະບອບປະຊາທິປະໄຕປະຊາຊົນ ແລະ ພັດທະນາປະເທດຊາດ, ຊຶ່ງປົກປັກຮັກສາລະບອບປະຊາທິປະໄຕປະຊາຊົນ ກໍແມ່ນການປົກປັກຮັກສາປະເທດຊາດ, ປົກປັກຮັກສາໝາກຜົນຂອງການປະຕິວັດທີ່ຍາດມາໄດ້, ປົກປັກຮັກສາເອກະລາດ, ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງຊາດໄວ້ໃຫ້ໄດ້ຢ່າງໝັ້ນຄົງ, ຮັບປະກັນໃກ້ປະເທດເຮົາມີຄວາມສະຫງົບ ແລະ ມີສະຖຽນລະພາບ ທົ່ວປວງຊົນຮອບດ້ານຢ່າງຕັ້ງໜ້າ; ສ້າງໃຫ້ກອງທັບກາຍເປັນກອງທັບທີ່ເຂັ້ມແຂງ ທັນສະໄໝ, ເປັນກຳລັງທີ່ຈົງຮັກພັກດີອັນບໍລິສຸດຜຸດຜ່ອງຕໍ່ຜົນປະໂຫຍດລວມຂອງຊາດ ເພື່ອເປັນກຳລັງຫຼັກທີ່ສຳຄັນໃນການປົກປັກຮັກສາ

ລະບອບປະຊາທິປະໄຕ ປະຊາຊົນເຮົາ, ສ້າງເງື່ອນໄຂອຳນວຍໃຫ້ແກ່ພາລະກິດສ້າງສາພັດທະນາປະເທດຊາດ ແລະ ການທຳມາຫາກິນຂອງປະຊາຊົນເຮົາ.

ການພັດທະນາປະເທດຊາດ ໂດຍສະເພາະແມ່ນການພັດທະນາເສດຖະກິດ-ສັງຄົມ, ວັດທະນະທຳ ແລະ ຊີວິດການເປັນຢູ່ຂອງຄົນພາຍໃນຊາດໃຫ້ດີຂຶ້ນ, ມີລາຍຮັບສູງຂຶ້ນ ແລະ ມີສ່ວນເຫຼືອແຮໄວ້, ເຮັດໃຫ້ຄົນໃນຊາດໄດ້ຮັບການພັດທະນາ, ມີຄວາມຮູ້, ຄວາມສາມາດ, ມີຈິດໃຈໂອບເອື້ອອາລີ, ຮັກເຊື້ອແພງຊາດ, ມີນ້ຳໃຈບໍລິສຸດສັດຊື່, ຮັກຄວາມກ້າວໜ້າ ແລະ ມີສຸຂະພາບແຂງແຮງ ປະກອບສ່ວນພັດທະນາປະເທດຊາດ ໃຫ້ຈະເລີນຮຸ່ງເຮືອງຂຶ້ນ.

ພ້ອມກັນນີ້, ພັກປະຊາຊົນປະຕິວັດລາວ ເວລາກໍຍຶດໝັ້ນ 6 ຫຼັກການຂອງການປ່ຽນແປງໃໝ່ ຄື: **ຫຼັກການທີ 1:** ຍຶດໝັ້ນຈຸດໝາຍສັງຄົມນິຍົມ, **ຫຼັກການທີ 2:** ຍຶດໝັ້ນ ແລະ ໝູນໃຊ້ລັດທິມາກ-ເລນິນ ຢ່າງປະດິດສ້າງ, ສອດຄ່ອງກັບຈຸດພິເສດຂອງປະເທດເຮົາ, **ຫຼັກການທີ 3:** ຍຶດໝັ້ນໃນການນຳພາຂອງພັກ, ເພີ່ມທະວີຄວາມສາມັກຄີເປັນເອກະພາບພາຍໃນພັກ ບົນພື້ນຖານຫຼັກການລວມສູນປະຊາທິປະໄຕ ແລະ ແນວທາງຂອງພັກ, **ຫຼັກການທີ 4:** ເສີມຂະຫຍາຍປະຊາທິປະໄຕ ແລະ ສິດເປັນເຈົ້າຂອງປະຊາຊົນບັນດາເຜົ່າ, ສ້າງກຳລັງສາມັກຄີທົ່ວປວງຊົນ ແລະ ຄວາມເປັນປຶກແຜ່ນຂອງຊາດລາວເອກະພາບ, **ຫຼັກການທີ 5:** ເພີ່ມທະວີຄວາມສັກສິດຂອງລະບົບອຳນາດ ປະຊາທິປະໄຕ ປະຊາຊົນ, ອີງໃສ່ກຳລັງແຮງຂອງປະຊາຊົນ ແລະ ເພື່ອປະຊາຊົນ, ຕ້ານປະກົດການອາດຍາສິດທຸກຮູບແບບ ແລະ **ຫຼັກການທີ 6:** ເຊີດຊູຈິດໃຈເອກະລາດເປັນເຈົ້າຕົນເອງ ສົມທົບກັບກຳລັງແຮງຂອງຍຸກສະໄໝ.

ພັກປະຊາຊົນປະຕິວັດລາວເປັນພັກກຳອຳນາດ, ມີຄວາມຮັບຜິດຊອບໃນການນຳພາທົ່ວປວງຊົນ, ວາງແຜນ ແລະ ບູລະນະແນວທາງນະໂຍບາຍໃໝ່ທີ່ມີລັກສະນະກຳນົດທິດຂະຫຍາຍຕົວຂອງປະເທດຊາດໃນທຸກຂົງເຂດ ໃຫ້ສອດຄ່ອງກັບການຂະຫຍາຍຕົວຂອງສັງຄົມ ແລະ ສອດຄ່ອງກັບການຂະຫຍາຍຕົວຂອງປະເທດຊາດ, ຕອບສະໜອງຄວາມມຸ່ງມາດປາຖະໜາອັນແຮງກ້າຂອງປະຊາຊົນບັນດາເຜົ່າ, ເຕົ້າໂຮມຄວາມສາມັກຄີເປັນເອກະພາບທົ່ວປວງຊົນລາວທັງຊາດ. ພັກເປັນແກນນຳໃນລະບົບການເມືອງ ແຫ່ງລະບອບປະຊາທິປະໄຕປະຊາຊົນ, ເສີມຂະຫຍາຍພາລະບົດບາດຄຸ້ມຄອງ ແລະ ຈັດຕັ້ງປະຕິບັດຂອງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມອື່ນໆ. ພັກເຄົາລົບ ແລະ ເຄື່ອນໄຫວຕາມລັດຖະທຳມະນູນ ແລະ ກົດໝາຍ.

## 3. ການຊີ້ນຳ-ນຳພາໃນຂົງເຂດວຽກງານທີ່ຮັບຜິດຊອບຂອງກງານມີຄືແນວໃດ? ໂດຍສະເພາະຜົນງານການເຄື່ອນ ໄຫວວຽກງານຂອງທະນາຄານ ພາຍໃຕ້ການຊີ້ນຳ-ນຳພາຂອງຄະນະພັກຮາກຖານ ທຄຕລ ເປັນແນວໃດ?

ຄະນະພັກຮາກຖານໄດ້ເອົາໃຈໃສ່ຊີ້ນຳໆພາ ການດຳເນີນທຸລະກິດຂອງທະນາຄານ ຢ່າງມີຫົວຄິດປະດິດສ້າງ, ນຳໃຊ້ ແລະ ບໍລິຫານທຶນຮອນທີ່ມີຢູ່ໃຫ້ມີປະສິດທິຜົນ ບົນພື້ນຖານການວິເຄາະ, ພິຈາລະນາຄວາມສ່ຽງ ແລະ ສຸມໃສ່ຄວາມອາດສາມາດທ່າແຮງບົ່ງຊ້ອນທີ່ມີ ເພື່ອເຮັດໃຫ້ການດຳເນີນງານມີປະສິດທິຜົນສູງສຸດຊຶ່ງສະແດງ ອອກຄື:

- ຈັດກອງປະຊຸມສະພາບໍລິຫານສະໄໝສາມັນ 5 ຄັ້ງ; ກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2018: 1 ຄັ້ງ, ຈັດກອງປະຊຸມທົບທວນຜົນການດຳເນີນທຸລະກິດ ທຄຕລ 4 ຄັ້ງ;
- ເຊັນສັນຍາວ່າດ້ວຍການບໍລິການດ້ານການເງິນ ແລະ ຈຳໜ່າຍຮຸ້ນ ທຄຕລ 19% ຂອງກະຊວງການເງິນລະຫວ່າງ ທຄຕລ ກັບ ບໍລິສັດຫຼັກຊັບລາວ-ຈີນ ຈຳກັດ, ພ້ອມທັງສຳເລັດການການຂາຍຮຸ້ນອອກສູ່ສັງຄົມຈຳນວນ 10% ຕາມເວລາທີ່ກຳນົດ;
- ແຍກພະແນກຄຸ້ມຄອງສິນເຊື່ອອອກເປັນ 3 ຄື: ພະແນກປະຕິບັດການສິນເຊື່ອ, ພະແນກຂາຍຜະລິດຕະພັນສິນເຊື່ອ, ພະແນກບໍລິຫານສິນເຊື່ອ ແລະ ສ້າງຕັ້ງພະແນກນິຕິກຳ;
- ທຄຕລ ເຂົ້າເປັນສະມາຊິກໂດຍກົງຂອງ AMEX, ອອກຜະລິດຕະພັນໃໝ່ BCEL MasterCard;

- ຮ່ວມມືກັບ Swift Pass ໃນການບໍລິການຊຳລະເງິນດ້ວຍ WeChat ແລະ AliPay ແລະ ຮ່ວມມືກັບຢູນຽນເພສາກົນ ໃນການໃຫ້ບໍລິການຊຳລະສະສາງຜ່ານ QR CODE UnionPay ແລະ ຮ່ວມມືກັບ ທະນາຄານທະນາຊາດປະເທດໄທ ໃນການຊຳລະສະສາງຂ້າມຊາຍແດນດ້ວຍລະບົບ QR Code;
- ຮ່ວມລົງນາມສັນຍາຮ່ວມທຶນສ້າງຕັ້ງ ບໍລິສັດ ລາວເນເຊີນນໍເພເມັ້ນເນັດເວີກ ຈຳກັດ (LAPNET) ;
- BCEL Road Tax ສາມາດຍາດລາງວັນຮອງຊະນະເລີດ ICT AWARD 2019 ລະດັບປະເທດ ແລະ ຍາດໄດ້ລາງວັນຊະນະເລີດ ລະດັບອາຊຽນ;
- ພັດທະນາໂຄງການ Smart VAT Phase II ແລະ ເຊື່ອມລະບົບ ບ 53 ການຊຳລະຄ່າທຳນຽມນຳເຂົ້າລົດຊົ່ວຄາວຄົນຕ່າງປະເທດ ຂອງກົມພາສີ ໃຫ້ມາຊຳລະຢູ່ຕູ້ບໍລິການອັດຕະໂນມັດ ທີ່ຂົວມິດຕະພາບລາວ-ໄທ 1;
- ເປີດບໍລິການໃນວັນເສົາ-ທິດ ໂດຍເນັ້ນໃສ່ໜ່ວຍບໍລິການທີ່ມີບໍລິມາດການບໍລິການຫຼາຍຈຳນວນ 5 ໜ່ວຍໃນເບື້ອງຕົ້ນຄື: ໜ່ວຍບໍລິການໄອເຕັກ, ໜ່ວຍບໍລິການຕະຫຼາດເຊົ້າ; ໜ່ວຍບໍລິການສີໄຄ, ໜ່ວຍບໍລິການທົ່ງຈະເລີນ ແລະ ໜ່ວຍບໍລິການຕະຫຼາດໃໝ່ປາກເຊ.

➢ **ຜົນການດຳເນີນທຸລະກິດ ປີ 2019:**

**- ຍອດຊັບສິນ/ໜີ້ສິນ:** ປະຕິບັດໄດ້ເກີນແຜນ 9,6%;

**- ຍອດເງິນກູ້ທັງໝົດ:** ປະຕິບັດໄດ້ 104,5%;

**- ຍອດເງິນຝາກ:** ປະຕິບັດໄດ້ເກີນແຜນ 12%.

**(ຂໍຂອບໃຈ)**